# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ 27 ທັນວາ 2009 (12-27-2009)

## ຈົ່ງຟັງເພງຂອງຝູງເທວະດາ

**ຂໍ້ພຣະຄັມພີໃນບົດຮຽນນີ້:** ຟີລິບປອຍ 2:5-11

**ຄຳຖາມຊີວິດ:** ບົດຮຽນທີ່ຈະຊ່ອຍທ່ານໃຫ້ເຂົ້າໃຈເຖິງການເກີດເປັນເນື້ອໜັງ ແລະການຍົກອົງພຣະຄຣິດນັ້ນເປັນພື້ນຖານຊີວິດຂອງຄຣິສຕຽນ ເພື່ອຊ່ອຍທ່ານໃຫ້ຕິດຕາມເອົາແບບຢ່າງຂອງອົງພຣະເຢຊູ ຄືຮັບໃຊ້ດ້ວຍການຖ່ອມໃຈ.

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ໄດ້ເວົ້າເຖິງພຣະຜູ້ຊ່ອຍໃຫ້ພົ້ນໄດ້ສະເດັດເຂົ້າມາໃນໂລກ. ອາຈານໂປໂລໄດ້ສອນບົດຮຽນຂອງການຖ່ອມຕົວໂດຍຍົກເອົາຕົວຢ່າງຂອງອົງພຣະເຢຊູມາປະກອບໃຊ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ອະທິບາຍເຖິງການບັງເກີດເປັນເນື້ອໜັງຂອງອົງພຣະເຢຊູແລະ ສາມາດເອົາມາເປັນຕົວຢ່າງໃນການຖ່ອມຕົວເພື່ອພວກເຮົາຈະເອົາມາປະກອບໃຊ້.

ມີປີນຶ່ງຂ້າພະເຈົ້າພ້ອມພັລຍາໄດ້ເຫັນການສລອງວັນຄຣິສມາສຢ່າງເຖິງໃຈໃນຄຣິສຕະຈັກໃຫຍ່ແຫ່ງນຶ່ງໃນຣັດຄາລີຟໍເນັຽ. ໃນສາກລະຄອນນັ້ນມີຝູງຄົນແລະສັດເປັນຈຳນວນຫລາຍໄດ້ເອົາມາສະແດງປະກອບ. ສຽງເພງກໍມ່ວນແລະເປັນຕາຟັງ ພ້ອມກັບເວທີທີ່ສວຍສົດງົດງາມເປັນພິເສດ. ແຕ່ຢ່າງໃດກໍຕາມສິ່ງທີ່ຈຳໄດ້ດີກວ່າໝູ່ແມ່ນລູກຊາຍແລະລູກໃພ້ຂອງຂ້າພະເຈົ້າໄດ້ສະແດງເປັນ ໂຢເຊັບແລະມາຣີອາ ແລະຫລານຊາຍນ້ອຍເປັນພຣະເຢຊູ.

ຫົວຂໍ້ໃນບົດຮຽນນີ້ອອກມາຈາກຜູ້ແຕ່ງເພງ "ຈົ່ງຟັງເພງຂອງຝູງເທວະດາ" ໂດຍທ່ານ ຊາລີ ແວສເລ. ເພາະເພງນີ້ໄດ້ພັນລະນາເຖິງການສລອງພຣະກຳເນີດຂອງອົງພຣະເຢຊູຜູ້ເປັນພຣະບຸດຂອງພຣະເຈົ້າໃນຄວາມສັກສິດ ແລະເປັນມະນຸດ ("ຣັສມີຕໍ່ກະສັດອົງພຣະກຸມມານ"), ການເປັນມະນຸດແລະການຕາຍຂອງພຣະອົງ ("ບັງໄວ້ໃນຝ່າຍຮ່າງກາຍ") ການຄືນພຣະຊົນ ແລະການຍົກຂຶ້ນເປັນພຣະເຈົ້າຕລອດ ("ຍົກຍໍໃນສວັນ ຜູ້ເປັນເຈົ້າຊີວິດແຫ່ງສັນຕິສຸກ"). ບົດຮຽນນີ້ໄດ້ທ້າທາຍພວກເຮົາໃຫ້ນະມັສການອົງພຣະເຢຊູ ແລະເອົາຕົວຢ່າງໃນການຖ່ອມຕົວຂອງພຣະອົງມາໃຊ້ໃນຊີວິດ.

### 1. **ຣັສມີຈົ່ງມີຕໍ່ກະສັດຜູ້ປະສູດໃໝ່.** (ປີລິບປອຍ. 2:5-6)

ອາຈານໂປໂລຂຽນຈົດໝາຍເຖິງຄຣິສຕະຈັກໃນເມືອງຟີລິບປອຍເພື່ອຂອບໃຈກັບຄົນໃນທີ່ນັ້ນເພາະເຂົາໄດ້ໃຫ້ຄວາມຊ່ອຍເຫລືອແລະໜູນໃຈພວກເຂົາໃຫ້ເປັນອັນນຶ່ງອັນດຽວກັນ, ຮັບສັນຕິສຸກ, ແລະຍິນດີທີ່ໄດ້ຕິດຕາມຕົວຢ່າງຂອງອົງພຣະເຢຊູໃນການຖ່ອມໃຈແລະຮັບໃຊ້. ຄຣິສຕຽນໄດ້ຮ້ອງເພງສັຣເສີນພຣະເຢຊູເພື່ອສລອງເຖິງການເປັນພຣະເຈົ້າເໝືອນກັບພຣະບິດາ. ການທີ່ຖ່ອມຕົວເປັນມະນຸດ ແລະສິ້ນພຣະຊົນທີ່ເທິງໄມ້ກາງແຂນ, ພຣະອົງໄດ້ຖືກຍົກຂຶ້ນສູງດ້ວຍການຄືນມາຈາກຕາຍ, ແລະການເປັນພຣະເຈົ້າເພື່ອຮັບສະງ່າຣາສີ (ຟລປ 2:5-11).

ອາຈານໂປໂລບອກໃຫ້ເຮັດສີ່ຢ່າງເປັນການເຕືອນໃຈ, "ການໜູນໃຈຈາກອົງພຣະຄຣິດ...ປອບໃຈດ້ວຍຄວາມຮັກ...ມີຄວາມສາມັກຄີທັນໂດຍພຣະວິນຍານບໍຣິສຸດ" (ຂໍ້ 1) ແລະມີຄວາມເມດຕາດ້ວຍໃຈຈິງ. ອາຈານໂປໂລຮ້ອງຂໍໃຫ້ຜູ້ເຊື່ອທຸກຄົນເຂົ້າຮ່ວມກັບຄວາມຍິນດີນຳເພິ່ນ (ຂໍ້ 2) ດ້ວຍໃຫ້ມີຄວາມຮັກ, ແລະ ເປົ້າໝາຍຄ້າຍຄືກັນເພື່ອຈະ

ສາມາດຊ່ວຍຄົນອື່ນໄດ້ (ຂໍ້ 4) ອາຈານໂປໂລກ່າວວ່າການທີ່ເປັນນໍ້ານຶ່ງໃຈດຽວກັນໄດ້ນັ້ນຕ້ອງເອົາຕົວຢ່າງຂອງອົງພຣະເຢຊູ.

**ເຮັດແນວໃດຂ້າພະເຈົ້າຈຶ່ງຈະຍົກຍ້ອງກະສັດຜູ້ປະສູດໃໝ່ໄດ້?**

- ດ້ວຍການຍອມຮັບຮູ້ວ່າພຣະເຢຊູເປັນໃຜ
- ດ້ວຍການຍອມຮັບຮູ້ວ່າພຣະເຢຊູໄດ້ເຮັດຫຍັງ
- ດ້ວຍການຕອບສນອງຕໍ່ພຣະເຢຊູດ້ວຍຄວາມເຊື່ອ
- ດ້ວຍການເພິ່ງອົງພຣະເຢຊູໃນການນໍາພາ
- ດ້ວຍ_____________________________________________
- ດ້ວຍ_____________________________________________

ການຮ້ອງຂໍຕໍ່ຄຣິສະຕຽນໃຫ້ມີບຸກຄະລິກເລັກສະນະເໝືອນອົງພຣະຄຣິດນັ້ນເພາະສະພາບການເປັນຢູ່ຂອງອົງ **ພຣະຄຣິດນັ້ນໃນຮູບແບບເໝືອນພຣະເຈົ້າ.** ການທີ່ມີຮູບແບບຢ່າງພຣະເຈົ້ານັ້ນຄື ພຣະເຢຊູເປັນຢ່າງພຣະເຈົ້າໃນທັມມະຊາດແລະການເປັນຢູ່.

ເຖິງແມ່ນອົງພຣະຄຣິດເປັນພຣະບຸດຂອງພຣະເຈົ້າແທ້ ແຕ່ພຣະອົງຊົງຍອມກາຍເປັນມະນຸດ ເພາະພຣະອົງເອງຖ່ອມຕົວຈຶ່ງ**ບໍ່ຖືວ່າເທົ່າທຽມກັບພຣະເຈົ້າ-ຊຶ່ງເປັນການໃຊ້ເພື່ອຜົນປໂຍດສ່ວນຕົວ** ທັງໆທີ່ພຣະອົງເປັນຢູ່ຢ່າງນັ້ນມາ. ແຕ່ພຣະອົງເອງສາມາດປະທານຄວາມລອດພົ້ນຕໍ່ທຸກໆຄົນທີ່ຍອມຮັບເອົາພຣະອົງເປັນພຣະຜູ້ຊ່ອຍໃຫ້ພົ້ນ.

ເພື່ອຈະເຂົ້າໃຈເຖິງທັມມະຊາດຂອງພຣະເຈົ້າ, ພວກເຮົາຄວນເບິ່ງອົງພຣະເຢຊູ ໃຫ້ ພວກເຮົາມີຊີວິດເໝືອນພຣະອົງ. ຕ້ອງຮຽນຮູ້ວ່າພຣະເຢຊູຖ່ອມພຣະທັຍບໍ່ຖືຍົດຫລືຊັ້ນວັນນະ, ແຕ່ພຣະອົງຍອມຮັບໃຊ້ ພວກເຮົາຜູ້ທີ່ເຊື່ອຄວນຮຽນເອົາຕົວຢ່າງພຣະອົງຄືຮັບໃຊ້ຄົນອື່ນ. ໃນເມື່ອເຮົາມີຈິດໃຈຖ່ອມລົງ ພວກເຮົາກໍສາມາດຍົກຍ້ອງສັຣເສີນຕໍ່ກະສັດຜູ້ປະສູດມາໃໝ່ໄດ້.

## 2. <u>**ຖືກບັງໄວ້ຝ່າຍເນື້ອໜັງ**</u> (ຟີລິບປອຍ 2:7-8)

ແທນທີ່ຈະຍຶດເອົາຕໍາແໜ່ງແລະອໍານາດໃນໂລກນີ້ ອົງພຣະເຢຊູໄດ້ຍອມກາຍເປັນພາກສ່ວນຂອງການຊົງສ້າງຄືກາຍ **ເປັນມະນຸດ. ການເຮັດດັ່ງນັ້ນແມ່ນການຖອກເທຕົວເອງອອກ ແລະຮັບເອົາສະພາບເປັນທາດ.**

ພຣະເຢຊູກາຍເປັນມະນຸດໃນດ້ານຮ່າງກາຍ. ຄໍາເວົ້າວ່າຮ່າງກາຍ ແມ່ນກາຍພາຍນອກເຫັນວ່າເປັນຈິງແທ້. ການເກີດຢ່າງອັສຈັນບໍ່ໄດ້ເຮັດໃຫ້ການກາຍເປັນພຣະເຈົ້າສູນເສັຽໄປ; ພຽງແຕ່ເພີ້ມກາຍເປັນມະນຸດເທົ່ານັ້ນ. ໃຫ້ເຂົ້າໃຈວ່າອົງພຣະເຢຊູຊົງເປັນພຣະເຈົ້າ ແລະເປັນມະນຸດນັ້ນເປັນລັກສະນະທັມມະຊາດຂອງພຣະອົງຢູ່ແລ້ວຄືຢ່າງພຣະເຈົ້ານັ້ນຄົງຢູ່ ແຕ່ຢ່າງມະນຸດນັ້ນຕ້ອງຕາຍເພື່ອເປັນຄ່າໄຖ່.

**ຫວ້າງເປົ່າ**

ໃນພາສາກຣີກແປຄໍາເວົ້າ "ຫວ້າງເປົ່າ" ແມ່ນຍອມສະລະສິດ, ຍອມຖ່ອມຕົວລົງ. ອົງພຣະເຢຊູຍອມຟັງແລະເຮັດຕາມນໍ້າພຣະທັຍຂອງອົງພຣະບິດາ, ເອົາສະພາບເປັນພຣະເຈົ້າອອກໄປ ແລະເອົາສະພາບຢ່າງມະນຸດເຂົ້າມາ. ການທີ່ພຣະອົງເຮັດໃຫ້ຕົວຫວ້າງເປົ່ານັ້ນເໝືອນກັບວ່າພຣະອົງຍອມກາຍ"ເປັນຂ້າທາດ" (ຟີລິບປອຍ 2:7). ພຣະເຢຊູຍັງມີອໍານາດແຕ່ຍອມໃຊ້ອໍານາດຢ່າງຈໍາກັດ.

ວ່າອົງພຣະເຢຊູໄດ້ "ບັງໄວ້ໃນດ້ານເນື້ອໜັງ" ແລະໄດ້ຊົງ "ປະສູດເພື່ອມະນຸດຈະບໍ່ຕາຍ" ໂດຍທາງພຣະເຢຊູ "ພຣະເຈົ້າແລະມະນຸດຄືນດີກັນ!"

ເວລາພວກເຮົາຮັບເອົາອົງພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນສ່ວນຕົວແລ້ວ, ພວກເຮົາໄດ້ຮັບຊີວິດອັນຕລອດໄປເປັນນິດ ແລະຈະບໍ່ຕາຍທາງດ້ານວິນຍານຈິດ; ແຕ່ພວກເຮົາຄວນຍິນດີຕາຍທາງດ້ານເນື້ອງໜັງ, ຍອມແບກໄມ້ກາງແຂນແລະຕາມອົງພຣະເຢຊູໄປ. (ມທ 16:24). ຕາມຕົວຢ່າງຂອງອົງພຣະເຢຊູໃນການຖ່ອມຕົວ ພວກເຮົາໄດ້ຮຽນຮູ້ວ່າຜູ້ທີ່ເຊື່ອໃນພຣະອົງກາຍເປັນບຸດຍິງບຸດຊາຍຂອງພຣະເຈົ້າ. ພວກເຮົາຄວນມີຄວາມຍິນດີເຊື່ອຟັງພຣະອົງ- ເຖິງແມ່ນມັນຈຳເປັນຕ້ອງຍອມເສັຽສະລະ.

ເປັນເວລາຍາວນານເຖິງ 21 ປີ ນາງ ລິນດາເປັນພະຍາດມະເຮັງໃສ່ນົມ ເຖິງແມ່ນໝໍເອົາໃຈໃສ່ປົວໂດຍຢ່າງດີ ແລະມີຄົນເປັນຈຳນວນຫລາຍໄດ້ພາກັນອ້ອນວອນເພື່ອເປັນປະຈຳກໍຕາມ ນາງແລະສາມີກໍຍອມເຮັດຕາມພຣະເຈົ້າຄືຍັງສືບຕໍ່ຮັບໃຊ້ໃນຣັດລຸຍຊີອານາ ແລະຍັງອອກໄປປະກາດໃນຕ່າງປະເທດ. ນາງລິນດາ ໄດ້ເປັນພະຍານເຖິງເຣື່ອງນີ້ເປັນປະຈຳເທົ່າທີ່ມີໂອກາດ. ນາງກ່າວວ່າ, "ພຣະເຈົ້າອະນຸດຍາດໃຫ້ຂ້າພະເຈົ້າຢູ່ໄດ້ນານກໍເພາະພຣະອົງມີພຣະປະສົງອັນດີໃຫ້ແກ່ຂ້າພະເຈົ້າ." ຜູ້ເປັນສາມີໄດ້ບັນທຶກສິ່ງທີ່ເປັນປໂຍດຂອງ ນາງລິນດາເພາະຈະເອົາໄປໃຊ້ໜຸນໃຈຄົນອື່ນຫລັງຈາກນາງລິນດາໄດ້ຕາຍໄປ. ລາວໄດ້ຂຽນວ່າ "ພຣະເຈົ້າຮູ້ທຸກສິ່ງຢ່າງ. ພຣະຄຣິດເປັນພື້ນຖານອັນຖາວອນເພື່ອຊ່ອຍໃຫ້ລາວສາມາດປະເຊີນກັບຄວາມໂສກເສົ້າໄດ້ ຫລັງຈາກພັນລະຍາຕາຍຈາກໄປ, ຮູ້ວ່າພຣະເຈົ້າຈະເຮັດທຸກສິ່ງໃຫ້ກາຍເປັນອັນໃໝ່ທັງນັ້ນ. " ລາວໄດ້ກ່າວຕື່ມວ່າ "ຂ້າພະເຈົ້າອ້ອນວອນອະທິຖານໃຫ້ອົງພຣະເຢຊູກາຍເປັນພື້ນຖານຂອງທ່ານເໝືອນກັນ!"

### 3. <u>ພຣະຄຣິດຜູ້ເປັນທີ່ຍົກຍ້ອງໃນຟ້າສວັນ.</u> (ຟີລິບປອຍ 2:9)

ໃນເມື່ອພຣະບຸດຂອງພຣະເຈົ້າຍອມປະຖິ້ມກຽດຕິຍົດໃນສວັນ ແລະສະເດັດເຂົ້າມາໃນໂລກກາຍເປັນມະນຸດຜູ້ສັກສິດ- ເປັນພຣະຜູ້ໄຖ່ບາບຂອງມະນຸດ. ພຣະອົງໄດ້ໄຊ້ໜີ້ດ້ວຍຣາຄາແພງໂດຍຍອມທົນທຸກທໍຣະມານໃນຖານນະເປັນຜູ້ຮັບໃຊ້ເພື່ອຈະປະທານຄວາມພົ້ນໃຫ້.

**ດ້ວຍເຫດຜົນຢ່າງນີ້**ພຣະເຈົ້າໄດ້ເຮັດໃຫ້ພຣະເຢຊູຄືນມາຈາກຄວາມຕາຍ, ຍົກຂຶ້ນສູງ ແລະ**ປະທານພຣະນາມເໜືອນາມໃດໆທັງສິ້ນ.** ໃນທຳນຽມຂອງພຣະຄັມພີ ການໃສ່ຊື່ນັ້ນສຳຄັນຫລາຍເພາະມັນໄດ້ບອກເຖິງການເປັນຢູ່ ແລະລັກສະນະຂອງຄົນໆນັ້ນ. ເປໂຕໄດ້ເປັນພະຍານໃນເຣື່ອງນີ້ເວລາລາວເທສນາຄັ້ງແລກຫລັງຈາກອົງພຣະເຢຊູໄດ້ສະເດັດຂຶ້ນໄປສວັນ ແລະສົ່ງອົງພຣະວິນຍານລົງມາເພື່ອປະທານກຳລັງ, ເພື່ອນຳພາ. ເປໂຕຍັງກ່າວຕໍ່ໄປວ່າ "ພຣະເຢຊູໄດ້ເຮັດຕາມແຜນການພຣະເຈົ້າ" (ກິຈການ 2:23); ແຕ່ພຣະເຈົ້າໄດ້ໃຫ້ພຣະອົງຄືນພຣະຊົນຈາກຕາຍ (ຂໍ້ 24) ແລະສະຖິດກ້ຳຂວາຂອງພຣະເຈົ້າ (ຂໍ້ 33)

ພຣະເຢຊູ "ເຮັດຕົວເອງຫວ້າງເປົ່າ" (ຟລປ 2:7) ກາຍເປັນຂ້າໃຊ້ ແລະຕາຍທີ່ເທິງໄມ້ກາງແຂນເພື່ອພວກເຮົາ, ແລະພຣະບິດາໄດ້**ຍົກພຣະອົງຂຶ້ນສູງ** ເຫດຜົນທີ່ອົງພຣະເຢຊູໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນ ແລະຄືນມາຈາກຕາຍພຣະອົງຈຶ່ງສາມາດກາຍເປັນພຣະຜູ້ໄຖ່.

ຕໍ່ນັ້ນມາອົງພຣະເຢຊູໄດ້ສະເດັດຂຶ້ນໄປ-ກັບຄືນໄປເມືອງຟ້າສວັນຍັງເປັນພຣະຜູ້ໄຖ່ແລະພຣະເຈົ້າ ຈຶ່ງມີ "ພຣະນາມເໜືອນາມອື່ນທັງປວງ" (ຂໍ້ 9). ຄຳເວົ້າວ່າອົງພຣະຜູ້ເປັນເຈົ້າແມ່ນການມີອຳນາດເໜືອທຸກສິ່ງຢ່າງໃນການຊົງສ້າງ (ຄລຊ 1:15-20)- ໂດຍສະເພາະແລ້ວແມ່ນມະນຸດ (ຮຣ 2:9; ພນມ 17:14) ເໜືອທຸກສິ່ງດ້ານວິນຍານຈິດ (ອຟຊ. 6:10-17). ພຣະອົງຊົງເປັນພຣະຄຣິດ, ຜູ້ທີ່ທຸກສິ່ງໃນສວັນນະມັສການ; ພຣະອົງເປັນພຣະເຈົ້າຕລອດການ. (ຊາລີ ແວສລີ).

ພຣະເຢຊູ ຜູ້ບັງເກີດເປັນເນື້ອໜັງ, ເປັນການສົມຄວນທີ່ທຸກຄົນຄວນນະມັສການພຣະອົງ. ໃນເມື່ອຄົນເຮົາຕ້ອນຮັບເອົາພຣະອົງໂດຍຄວາມເຊື່ອ ແລະຮັບເອົາພຣະອົງເປັນພຣະຜູ້ໂຜດໃຫ້ພົ້ນ. ຝູງຊົນທັງຫລາຍກໍ່ຊອກສແວງຫາຍົກຍ້ອງແລະນະມັສການພຣະອົງທຸກໆວັນ.

**4. <u>ຍົກຍໍໃນສວັນຜູ້ເປັນເຈົ້າຊີວິດແຫ່ງສັນຕິສຸກ</u>** (ຟີລິບປອຍ 2:10-11)

> ຈາກຕົວຢ່າງຂອງອົງພຣະເຢຊູ ພວກເຮົາໄດ້ຮຽນຮູ້ວ່າຜູ້ທີ່ເຊື່ອໃນພຣະອົງເປັນພຣະອົງເຈົ້າ...ເຊື່ອຟັງພຣະອົງດ້ວຍຄວາມຍິນດີ-ເຖິງແມ່ນມັນອາດປະກອບດ້ວຍການເສັຽສະລະຕົວເອງ.

ອາຈານໂປໂລກ່າວວ່າໃນທີ່ສຸດທຸກຄົນຈະ**ສາລະພາບ**ວ່າອົງພຣະເຢຊູຊົງ**ເປັນພຣະຜູ້ເປັນເຈົ້າ.** ພຣະອົງເປັນຜູ້ມີອຳນາດຄືນມາຈາກຕາຍ-ປະສູດມາເປັນກະສັດແຫ່ງສັນຕິສຸກ! ແລະເປັນພຣະບຸດຂອງພຣະເຈົ້າອົງທ່ຽງທັມ ແລະສັດຊື່ ຜູ້ນຳເອົາແສງສວ່າງແລະຊີວິດມາສູ່ທຸກຄົນຜູ້ຍອມຜິດ (ໂຣມ 10:9) ແລະເຊື່ອວ່າພຣະອົງຊົງເປັນອົງພຣະເຈົ້າຜູ້ຄືນມາຈາກຕາຍ.

ການເຊື່ອແລະສາລະພາບວ່າພຣະອົງຊົງເປັນພຣະຄຣິດ ແມ່ນຫົນທາງດຽວເທົ່ານັ້ນທີ່ຈະກັບຄືນດີກັບພຣະເຈົ້າໄດ້. ໃນອະນາຄົດທຸກໆຄົນ ແລະທຸກວິນຍານຈິດຈະຄຸເຂົ່າລົງຍອມ**ຕໍ່ພຣະນາມ**ຮັບວ່າພຣະຄຣິດຊົງເປັນພຣະຜູ້ເປັນເຈົ້າ **ເພື່ອສັຣເສີນຕໍ່ອົງພຣະບິດາ.**

ສຳລັບຜູ້ຕ້ອນຮັບເອົາພຣະເຢຊູໃນຊີວິດນີ້ ແມ່ນການສາລະພາບອັນຍິ່ງໃຫຍ່ ແລະສັຣເສີນຕໍ່ພຣະອົງທີ່ພຣະອົງປະທານຄວາມພົ້ນໃຫ້. ແຕ່ສຳລັບຜູ້ທີ່ບໍ່ຍອມຮັບເອົາພຣະເຢຊູໃນຊີວິດນີ້ ມັນອາດເປັນການຜິດອັນໃຫຍ່ຫລວງແລະຊ້າໄປທີ່ຈະຮັບເອົາຄວາມພົ້ນ! ພວກເຮົາຜູ້ທີ່ເຊື່ອຄວນເອົາໃຈໃສ່ບອກຄົນອື່ນໃຫ້ເຊື່ອແລະຍອມຮັບວ່າອົງພຣະເຢຊູເປັນພຣະຄຣິດ ແລະສາມາດປະທານຄວາມພົ້ນຕໍ່ທຸກໆຄົນຜູ້ຍອມຮັບເອົາຄວາມເຊື່ອ.

### ບົດຮຽນໃນຊີວິດ

ບົດຮຽນວັນນີ້ແມ່ນການສຶກສາໃນປຶ້ມເພງທີ່ກ່າວເຖິງອຸປະນິສັຍຂອງອົງພຣະເຢຊູ ສິ່ງນີ້ກໍ່ສາມາດພົບເຫັນໄດ້ໃນຈົດໝາຍຂອງອາຈານໂປໂລທີ່ຂຽນໄປເຖິງຄຣິສຕະຈັກເມືອງຟີລິບປອຍ. ເພງເຫລົ່ານີ້ກ່າວເຖິງລະດູຄຣິສມາສ ແລະໃນເດືອນນີ້ພວກເຮົາພາກັນສຶກສາເຖິງ "ເພງຄຣິສມາສເຣື່ອງພຣະເຈົ້າ." ບົດຮຽນວັນນີ້ໄດ້ເຕືອນພວກເຮົາໃຫ້ຄິດເຖິງການທີ່ອົງພຣະເຢຊູໄດ້ກາຍເປັນເນື້ອໜັງ ແລະຖືກຍົກຂຶ້ນສູງ ເພື່ອສາມາດປະທານຄວາມພົ້ນ ແລະທ້າທາຍພວກເຮົາໃຫ້ເອົາຕົວຢ່າງຂອງພຣະອົງ ໂດຍການຖ່ອມໃຈຮັບໃຊ້ຄົນອື່ນ.

ຈາກເພງສັຣເສີນໃນພຣະຄັມພີ ພວກເຮົາໄດ້ຮັບຄຳແນະນຳສີ່ຢ່າງ.

- ແທນທີ່ຈະຍົກຍ້ອງທ່າທີຂອງໂລກນີ້ ພວກເຮົາຄວນເອົາຕົວຢ່າງຂອງອົງພຣະເຢຊູ ຄືພຣະອົງຖ່ອມພຣະທັຍລົງຮັບໃຊ້ຄົນອື່ນ ແລະພວກເຮົາຄວນເຮັດດັ່ງນັ້ນໃນພຣະນາມຂອງພຣະອົງ.
- ຜູ້ທີ່ເຊື່ອຄວນມີຄວາມຍິນດີທີ່ໄດ້ເຊື່ອຟັງພຣະອົງເຖິງແມ່ນຕ້ອງເສັຽສະລະຕົນເອງ.
- ຜູ້ທີ່ເຊື່ອຄວນນະມັສການແລະຍົກຍ້ອງພຣະເຢຊູໃນຊີວິດປະຈຳວັນ.
- ຜູ້ທີ່ເຊື່ອຄວນເອົາໃຈໃສ່ຊ່ວຍຄົນອື່ນໃຫ້ມີຄວາມເຊື່ອ ແລະສາລະພາບຕໍ່ອົງພຣະເຢຊູກ່ອນມັນຈະຊ້າເກີນໄປ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.**